**ຍິນດີຕ້ອນຮັບ** ມາສູ່ໂຄງການ **Washington Electronic Benefits Transfer (EBT)** ແລະ **Washington Quest EBT Card** —ທີ່ນທາງທີ່ປອດພັຍ, ສະດວກແລະງ່າຍ ສຳລັບທ່ານ ທີ່ຈະໃຊ້ການຊ່ວຍ ເຫລືອຂອງທ່ານ.

ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານຈຳເປັນ, ທ່ານສາມາດໃຊ້ບັດ Washington Quest EBT Card ຂອງທ່ານເພື່ອຈະຊື້ເອົາອາຫານທີ່ຖືກເລືອກເອົາຢູ່ຕາມຮ້ານຄ້າທີ່ເຂົ້າຮ່ວມລວມທັງຮ້ານທີ່ສະເນີການຊື້ເອົາທາງອອນລາຍນ໌.

ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫລືອເງິນສົດ, ທ່ານສາມາດໃຊ້ບັດ Washington Quest EBT Card ຂອງທ່ານເພື່ອຈະເອົາເງິນສົດຫລືຈ່າຍສຳລັບສິ່ງທີ່ຊື້ເອົາຢູ່ຕາມຮ້ານທີ່ເຂົ້າຮ່ວມແລະຖອນເອົາເງິນຊ່ວຍເຫລືອຂອງທ່ານຈາກຈັກ ATMs.

## ມັນງ່າຍອີຫລີ!



### ຈະໃຊ້ບັດ WASHINGTON QUEST EBT CARD ຂອງທ່ານຢູ່ຕາມຮ້ານຄ້າໄດ້ແນວໃດ

1. ຮູ້ຈັກຈຳນວນເງິນຍັງເຫລືອຢູ່ຂອງທ່ານກ່ອນທີ່ທ່ານຈະອອກຕະລາດໂດຍການເຂົ້າຢ້ຽມ www.ebtedge.com ຫລືໂທຫາສູນກາງປະຊາສັມພັນ.
2. ຮູດບັດ Washington Quest EBT Card ຂອງທ່ານໃສ່ເຄື່ອງຈັກຈຸດບ່ອນຂາຍ Point-Of-Sale (POS) ຫລືຍື່ນບັດຂອງທ່ານໃຫ້ພະນັກງານ/ ຜູ້ເກັບເງິນ.
3. ໃຫ້ຫມັ້ນໃຈວ່າຈະບອກພະນັກງານວ່າບັນຊີອັນໃດທີ່ຈະໄລເອົາເງິນນຳ (ອາຫານ ຫລືເງິນສົດ) .
4. ຕີເລກປະຈຳຕົວສ່ວນຕົວສີ່ເລກ (PIN) ຂອງທ່ານໃສ່ໃນ ແຜ່ນຕີເລກ. ເຄື່ອງຈັກຈະສະແດງໃຫ້ເຫັນ ****.
5. ບີບປຸ່ມ OK ຫລື ENTER
6. ພະນັກງານຈະຕີຈຳນວນເງິນຊື້ເຂົ້າໃສ່ແລະ, ຖ້າຫາກວ່າຖືກຕ້ອງ, ໃຫ້ທ່ານບີບປຸ່ມ YES.
7. ພະນັກງານຈະຍື່ນໃບຮັບເງິນຂອງທ່ານໃຫ້ທ່ານ; ໃຫ້ຫມັ້ນໃຈວ່າຣາຍ ຣະອຽດຢູ່ໃນໃບຮັບແມ່ນຖືກຕ້ອງ.
8. ໃຫ້ເກັບໃບຮັບໃບນີ້ໄວ້ເພື່ອວ່າທ່ານຈະຮູ້ຈັກເງິນຍັງເຫລືອຢູ່ຈຳນວນ ໃຫມ່ຂອງທ່ານເວລາທ່ານອອກຕະລາດ ເທື່ອຫນ້າ.

ຂັ້ນຕອນອາດຈະແຕກຕ່າງກັນສຳລັບເຄື່ອງຈັກ POS ແຕ່ລະຊະນິດຫລືຣະບົບການຈ່າຍເງິນທີ່ທ່ານໃຊ້. ໃຫ້ສອບຖາມພະນັກງານຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອ.

ມີແຕ່ຈຳນວນເງິນຕົງກັບການຊື້ອາຫານຂອງທ່ານເທົ່ານັ້ນຈະຖືກຫັກອອກຈາກບັນຊີການຊ່ວຍເຫລືອອາຫານຂອງທ່ານ.ຮ້ານຈະບໍ່ທອນເງິນໃຫ້ທ່ານສຳລັບການຊື້ດ້ວຍການຊ່ວຍເຫລືອອາຫານຂອງທ່ານ.

ທ່ານອາດຈະໃຊ້ການຊ່ວຍເຫລືອເງິນສົດຂອງທ່ານຕາມຮ້ານຕ່າງໆເພື່ອຈະຖອນເງິນສົດເທົ່ານັ້ນຫລືເພື່ອຈະຊື້ເອົາທັງອາຫານແລະ ເຄື່ອງຂອງຕ່າງໆທີ່ບໍ່ແມ່ນອາຫານ (ສະບູ,ຄາຍເປີ, ເປັນຕົ້ນ) .ຮ້ານອາດເອົາເງິນສົດໃຫ້ທ່ານຄືນເມື່ອເວລາທ່ານທຳການຊື້ຈາກບັນຊີເງິນສົດຂອງທ່ານ.ຖ້າຫາກວ່າທ່ານມີຄຳຖາມແນວໃດ, ໃຫ້ຖາມນຳຄົນຂາຍ.




### ຈະໃຊ້ບັດ WASHINGTON QUEST EBT CARD ຂອງທ່ານຢູ່ຕາມຈັກຖອນເງິນອັດຕະໂນມັດ (ATM) ໄດ້ແນວໃດ

( ສຳລັບການຖອນເອົາການຊ່ວຍເຫລືອເງິນສົດເທົ່ານັ້ນ; ການຊ່ວຍເຫລືອອາຫານຈະບໍ່ສາມາດເຂົ້າຫາໄດ້ໂດຍຜ່ານຈັກ ATM)

1. ສອດຫລືຮູດບັດຂອງທ່ານ.
2. ຕີເລກ PIN ຂອງທ່ານໃສ່ແລະບີບປຸ່ມ OK ຫລື ENTER
3. ໃຫ້ເລືອກເອົາປຸ່ມທີ່ຖືກຫມາຍໃສ່ WITHDRAW CASH ແລະ ແລ້ວເລືອກເອົາ CHECKING
4. ໃຫ້ຕີຈຳນວນເງິນທີ່ທ່ານຢາກໄດ້ເປັນຈຳນວນດອນລາເຕັມ (ຕົວຢ່າງວ່າ, $20, $40, $60, ອື່ນໆ).
5. ຖ້າຫາກວ່າມີການເກັບເງິນເກີນ,
   - ເລືອກເອົາ YES ເພື່ອຈະຮັບເອົາແລະເຮັດການຝາກຖອນ ຕໍ່ໄປ.
   - ເລືອກເອົາ NO ເພື່ອຈະຍົກເລີກການຖອນຖ້າຫາກວ່າທ່ານບໍ່ຢາກຈະຈ່າຍການເກັບເງິນເກີນ.
6. ເອົາບັດຂອງທ່ານ, ໃບຮັບຂອງທ່ານແລະ ເງິນຂອງທ່ານ. ຖ້າຫາກວ່າເຄື່ອງຈັກ ATM ກັກເອົາບັດຂອງທ່ານໄວ້, ຈົ່ງຕິດຕໍ່ຫາພະແນກປະຊາສັມພັນໄດ້ທີ່ 888-328-9271.
7. ໃຫ້ນັບເງິນຂອງທ່ານແລະປຽບທຽບໃສ່ໃບຮັບເງິນຂອງທ່ານ.
8. ໃບຮັບຈາກ ATM ຈະສະແດງໃຫ້ເຫັນເງິນສົດຖັງເຫລືອຢູ່ທີ່ຍັງມີໄວ້ໃຫ້.

ມັນຈະໃຊ້ການຝາກຖອນຫລາຍໆເທື່ອເພື່ອຈະຖອນເອົາການຊ່ວຍເຫລືອເງິນສົດຂອງທ່ານທັງຫມົດຈາກເຄື່ອງຈັກ ATM ຖ້າຫາກວ່າເຄື່ອງຈັກມີຂອບເຂດໃນຈຳນວນເງິນສົດທີ່ທ່ານສາມາດຖອນເອົາໄດ້ແຕ່ລະເທື່ອ. ມັນອາດຈະມີການເກັບເງິນເກີນຖືກ ເກັບເອົາໂດຍທະນາຄານສຳລັບການຖອນແຕ່ລະເທື່ອ.

## ຄຳຖາມແລະຄຳຕອບກ່ຽວກັບບັດ WASHINGTON QUEST EBT

### *ຂ້າພະເຈົ້າຈະເອົາການຊ່ວຍເຫລືອຂອງຂ້າພະເຈົ້າດ້ວຍບັດ Washington Quest EBT Card ໄດ້ແນວໃດ?*

ແຕ່ລະເດືອນການຊ່ວຍເຫລືອຂອງທ່ານຈະຖືກເພີ້ມເຂົ້າໃສ່ບັນຊີຂອງທ່ານຢ່າງອັດຕະໂນມັດ. ທ່ານຈະໃຊ້ບັດ Washington Quest EBT Card ໃບດຽວກັນທຸກໆເດືອນເພື່ອຈະຮັບເອົາການຊ່ວຍເຫລືອຂອງທ່ານ. ໃນເມື່ອທ່ານໃຊ້ການຊ່ວຍເຫລືອຂອງທ່ານເພື່ອຈະເອົາເງິນສົດຫລືຊື້ເອົາສິ່ງຂອງ, ຈຳນວນຍັງເຫລືອຢູ່ໃນບັນຊີ ຂອງທ່ານຈະລຸດລົງ.ບໍ່ຕ້ອງໄດ້ເຮັດບັດໃບໃຫມ່ແທນບັດຂອງທ່ານນອກຈາກວ່າບັດຖືກເສັຽໄປ,ຂະໂມຍໄປ,ຫລືເສັຽຫາຍ.

### *ເມື່ອໃດຂ້າພະເຈົ້າໄດ້ການຊ່ວຍເຫລືອຂອງຂ້າພະເຈົ້າ?*

ການຊ່ວຍເຫລືອຈະຖືກຝາກເຂົ້າບັນຊີ EBT ຂອງທ່ານໃນວັນດຽວກັນໃນແຕ່ລະເດືອນ, ເຖິງແມ່ນວ່າມັນຈະຕົກເປັນວັນສຸດສັບປະດາ ຫລື ວັນພັກບຸນກໍຕາມ. ການຊ່ວຍເຫລືອທຸກໆຢ່າງຈະມີໄວ້ໃຫ້ໃຊ້ໄດ້ກ່ອນ 9 ໂມງເຊົ້າຕາມເວລາແປຊີຟິກ. ການຊ່ວຍເຫລືອຕ່າງໆທີ່ທ່ານຍັງມີເຫລືອຢູ່ໃນທ້າຍຂອງເດືອນຈະຖືກໂອນຕໍ່ໄປຫາເດືອນຫນ້າ.

### *ຂ້າພະເຈົ້າສາມາດໃຊ້ບັດ Washington Quest EBT Card ຂອງຂ້າພະເຈົ້າໄດ້ຢູ່ໃສ?*

ທ່ານສາມາດໃຊ້ບັດ Washington Quest EBT Card ຂອງທ່ານໄດ້ຢູ່ຕາມຮ້ານຄ້າທີ່ເຂົ້າຮ່ວມແລະຈັກ ATMs (ສຳລັບການຊ່ວຍເຫລືອເງິນສົດເທົ່ານັ້ນ) ທົ່ວປະເທດ. ທ່ານຍັງສາມາດໃຊ້ບັດຂອງທ່ານໄດ້ອີກຄືກັນຢູ່ທຸກໆບ່ອນທີ່ທ່ານເຫັນກາເຄື່ອງຫມາຍ Quest. ຖ້າຫາກວ່າທ່ານບໍ່ເຫັນກາເຄື່ອງຫມາຍ Quest, ສອບຖາມຜູ້ຈັດການຮ້ານຄ້າວ່າທ່ານສາມາດໃຊ້ບັດຂອງທ່ານຢູ່ໃນຮ້ານເພື່ອຈະຊື້ເອົາອາຫານ ຫລື ເອົາການຊ່ວຍເຫລືອເງິນສົດໄດ້ຫລືບໍ່.

QUEST®

### *ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຫາກວ່າຂ້າພະເຈົ້າເຮັດບັດຂອງຂ້າພະເຈົ້າເສັຽ?*

ຖ້າຫາກວ່າບັດ Washington Quest EBT Card ຂອງທ່ານໄດ້ເສັຽໄປ, ຂີ້ລັກໄປ ຫລື ເສັຽຫາຍ, ທ່ານຄວນຈະໂທຫາພະແນກປະຊາສັມພັນ,ໂດຍທັນທີໂລດ,ເລກໂທຟຣີໄດ້ທີ່ 1-888-328-9271 ເພື່ອຈະໃຫ້ບັດຖືກເຮັດໃຫ້ໃຊ້ການບໍ່ໄດ້, ແລະບັດໃບໃຫມ່ແທນຖືກສົ່ງໄດໃຫ້ທ່ານ.

### *ເລກບັດຂອງຂ້າພະເຈົ້າແມ່ນຫຍັງ?*

ເລກບັດຂອງທ່ານເປັນເລກ 16 ຕົວຊຶ່ງຖືກຕີພິມຢູ່ທາງຫນ້າຂອງບັດຂອງທ່ານ.

### *ຖ້າບັດຂອງຂ້າພະເຈົ້າໃຊ້ການບໍ່ໄດ້ແລ້ວຈະເຮັດແນວໃດ?*

ໂທຫາພະແນກປະຊາສັມພັນແລະເຂົາເຈົ້າຈະຊ່ວຍເຫລືອທ່ານ. ເລກນີ້ຈະພົບເຫັນໄດ້ຢູ່ທາງດ້ານຫລັງຂອງບັດຂອງທ່ານ. ພະແນກປະຊາສັມພັນຈະມີໄວ້ຮັບໃຊ້ 24 ຊົ່ວໂມງຕໍ່ມື້, ເຈັດວັນຕໍ່ອາທິດ.

### *ຖ້າມີການຖອນທີ່ບໍ່ຖືກຕ້ອງໃນບັນຊີຂອງຂ້າພະ ເຈົ້າເດ?*

ເມື່ອຮ້ານຄ້າຖືກຈ່າຍເງິນໃຫ້ບໍ່ວ່າຈະແມ່ນຫລາຍເກີນໄປຫລື ຫນ້ອຍເກີນໄປຈາກບັນຊີ EBT ຂອງທ່ານຍ້ອນບັນຫານຳຣະບົບຄອມພິວເຕີ, ການດັດແປງອາດຈະຖຸກເຮັດໄດ້ໃສ່ບັນຊີຂອງທ່ານ. ການດັດແປງອັນນີ້ສາມາດສະທ້ອນເຖິງຈຳນວນຍັງເຫລືອຂອງເດືອນປັດຈຸບັນຫລືເດືອນຕໍ່ໄປຂອງທ່ານ. ທ່ານຈະໄດ້ຮັບໃບແຈ້ງການດັດແປງຄວາມຜິດພາດໃນບັນຊີ EBT ຖ້າຫາກມັນຈະລຸດເງິນຍັງເຫລືອຂອງທ່ານລົງ.

### *ຂ້າພະເຈົ້າຈະປົວຣະບັດຮັກສາບັດຂອງຂ້າພະເຈົ້າແນວໃດ?*

1. ເຊັນຊື່ໃສ່ດ້ານຫລັງຂອງບັດຂອງທ່ານ.
2. ຢ່າຂຽນເລກຣະຫັດ PIN ໃສ່ໃນບັດຂອງທ່ານ.
3. ເກັບຮັກສາບັດຂອງທ່ານໄວ້ໃຫ້ປອດພັຍ ແລະ ສະອາດ.
4. ຢ່າສູ່ກົ່ງບັດຂອງທ່ານ.
5. ເກັບຮັກສາບັດຂອງທ່ານໃຫ້ໄກຈາກແມ່ເຫລັກ ແລະ ເຄື່ອງເອເລກໂຕຣນິກ, ເຊັ່ນວ່າ TV, ໄມໂກຣເວວ, ອື່ນໆ.
6. ຢ່າສູ່ປະໃສ່ແສງແດດໂດຍກົງ (ເຊັ່ນວ່າ,ຢູ່ແຜງຫນ້າປັດຣົດຂອງທ່ານ) .
7. ຢ່າສູ່ແກວ່ງບັດຂອງທ່ານຖິ້ມ; ທ່ານຈະໃຊ້ບັດໃບດຽວກັນທຸກໆເດືອນນານເທົ່ານານທີ່ທ່ານໄດ້ຮັບການຊ່ວຍເຫລືອຢູ່.
8. ການເຮັດບັດໃຫມ່ແທນຫລາຍເກີນໄປອາດຈະຖືກມີການສືບສວນສຳລັບການໃຊ້ແບບສໍ້ໂກງ.

### *ເລກຣະຫັດສ່ວນຕົວແມ່ນຫຍັງ ?*

PIN ແມ່ນເລກລັບສີ່ຕົວທີ່ອະນຸຍາດໃຫ້ທ່ານເທົ່ານັ້ນເພື່ອຈະໃຊ້ບັດ Washington Quest EBT Card ຂອງທ່ານ. ບັດ EBT ຈະບໍ່ທຳງານໂດຍປາສຈາກເລກ PIN. ຢ່າສູ່ບອກເລກ PIN ຂອງທ່ານໃຫ້ຜູ້ໃດຟັງຈັກເທື່ອ! ຖ້າຫາກວ່າຄົນໃດຄົນນຶ່ງຮູ້ຈັກເລກ PIN ຂອງທ່ານ, ເຂົາເຈົ້າສາມາດໃຊ້ບັດຂອງທ່ານເພື່ອຈະເອົາການຊ່ວຍເຫລືອຂອງທ່ານທັງຫມົດ ແລະ ການຊ່ວຍເຫລືອເຫລົ່ານັ້ນຈະບໍ່ສາມາດທົດແທນຄືນໄດ້.

### *ຂ້າພະເຈົ້າຈະເລືອກເອົາເລກ PIN ໄດ້ແນວໃດ?*

ທ່ານສາມາດເລືອກເອົາເລກ PIN ສີ່ຕົວຂອງທ່ານໂດຍການໂທຫາພະແນກປະຊາສັມພັນ,ຫລືຫ້ອງການ DSHS ບໍຣິການຊຸມນຸມຊົນ (CSO) ທ້ອງຖິ່ນຂອງທ່ານ. ຢ່າສູ່ໃຊ້ເລກ PIN ທີ່ຕວງໄດ້ງ່າຍໆເຊັ່ນວ່າ "1234, ຫລື "0000", ຫລືຮູບແບບທີ່ຕວງໄດ້ງ່າຍໆຕ່າງໆ.

### *ຖ້າຂ້າພະເຈົ້າລືມເລກ PIN ຂອງຂ້າພະເຈົ້າເດ?*

ຖ້າຫາກວ່າທ່ານລືມເລກ PIN ຂອງທ່ານ ຫລື ຢາກຈະປ່ຽນເລກ PIN ຂອງທ່ານ, ທ່ານສາມາດໂທຫາພະແນກປະຊາສັມພັນໄດ້.

### *ຖ້າຂ້າພະເຈົ້າຕີເລກ PIN ຜິດເຂົ້າໄປເດ?*

ຖ້າຫາກວ່າທ່ານຕີເລກ PIN ຜິດເຂົ້າໄປ, ທ່ານມີໂອກາດຕື່ມອີກສາມເທື່ອທີ່ຈະຕີເລກທີ່ຖືກຕ້ອງໃສ່. ຖ້າຫາກວ່າເລກ PIN ທີ່ຖືກຕ້ອງບໍ່ໄດ້ຖືກຕີເຂົ້າໃສ່ເຖິງເທື່ອທີສີ່, ບັດຈະຖືກລອກໄວ້ເພື່ອຈະປ້ອງກັນບັນຊີຂອງທ່ານ.ທ່ານຈະບໍ່ສາມາດທີ່ຈະໃຊ້ບັດໄດ້ອີກຈົນກວ່າຫລັງຈາກທ່ຽງຄືນ,ນອກຈາກວ່າທ່ານເຂົ້າໄປຫາຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນ DSHS ເພື່ອຈະເຮັດໃຫ້ການລອກເອົາໄວ້ຖືກປ່ອຍອອກ. ຢູ່ໃນ ບາງກໍຣະນີ, ບັດຂອງທ່ານອາດຈະຖືກກັກເອົາໄວ້ໂດຍຈັກ ATM. ຖ້າຫາກວ່າຈັກ ATM ເກັບເອົາບັດຂອງທ່ານໄວ້, ຈົ່ງຕິດຕໍ່ຫາພະແນກປະຊາສັມພັນ.

### *ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຄົນໃດຄົນນຶ່ງຮູ້ຈັກເລກ PINຂອງຂ້າພະເຈົ້າ?*

ໃຫ້ເລືອກເອົາເລກ PIN ເລກໃຫມ່ໂດຍທັນທີໂລດໂດຍການໂທຫາພະແນກປະຊາສັມພັນ,ຫລືໂດຍການປ່ຽນເລກ PIN ຂອງທ່ານທາງອອນລາຍນ໌ໄດ້ທີ່ **www.ebtedge.com** ຫລືແອບ໌ມືຖື ebtEDGE.

### *ຂ້າພະເຈົ້າຈະຮູ້ຈັກເງິນຍັງເຫລືອຢູ່ໃນບັນຊີຂອງຂ້າພະເຈົ້າໄດ້ແນວໃດ?*

ທາງທີ່ງ່າຍທີ່ສຸດເພື່ອຈະຮູ້ຈັກເງິນຍັງເຫລືອຢູ່ໃນບັນຊີຂອງທ່ານແມ່ນທີ່ຈະເກັບຮັກສາໃບຮັບຂອງທ່ານເອົາໄວ້.ຖ້າຫາກວ່າທ່ານບໍ່ມີໃບຮັບຂອງທ່ານ, ທ່ານຈະກວດເບິ່ງເງິນຍັງເຫລືອຂອງທ່ານໄດ້ທາງອິນເຕີແນດ໌ໄດ້ທີ່ **www.ebtedge.com** ຫລືແອບ໌ມືຖືebtEDGE ຫລືທ່ານສາມາດໂທຫາພະແນກປະຊາສັມພັນ. ທ່ານຄວນຈະຮູ້ຈັກເງິນຍັງເຫລືອຢູ່ໃນບັນຊີຂອງທ່ານສະເມີກ່ອນທີ່ທ່ານຈະອອກຕະລາດ.

### *ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າຈັກ **Point of Sale (POS)** ບໍ່ທຳງານ?*

ຖ້າຫາກວ່າທ່ານຢາກຈະຊື້ເອົາອາຫານທີ່ມີເງື່ອນໄຂຊື້ເອົາໄດ້ດ້ວຍການຊ່ວຍເຫລືອອາຫານຂອງທ່ານ, ແລະຈັກ POS ບໍ່ທຳງານຫລືມັນບໍ່ມີຈັກໆຫນ່ວຍຢູ່ໃນຮ້ານ, ຜູ້ເກັບເງິນຈະຂຽນປະກອບໃບຟອມທີ່ຖືກເອີ້ນວ່າໃບແລກເອົາການຊ່ວຍເຫລືອອາຫານ. ຜູ້ເກັບເງິນຈະຂຽນເລກບັດ Washington Quest EBT Card ຂອງທ່ານແລະຈຳນວນເງິນທີ່ທ່ານຈ່າຍໄປ. ຢ່າສູ່ເອົາເລກ PIN ຂອງທ່ານໃຫ້ຜູ້ເກັບເງິນ. ຜູ້ເກັບເງິນຈະໂທໄປເພື່ອຈະເບິ່ງວ່າທ່ານມີການຊ່ວຍເຫລືອພຽງພໍຫລືບໍ່ຢູ່ໃນບັນຊີການຊ່ວຍເຫລືອອາຫານ ຂອງທ່ານ ເພື່ອ ຈະຊື້ເອົາອາຫານ;ເຂົາເຈົ້າຈະບໍ່ກວດເບິ່ງບັນຊີ ຂອງການຊ່ວຍເຫລືອເງິນຂອງທ່ານ. ຖ້າຫາກວ່າມັນມີເງິນພຽງພໍຢູ່ໃນບັນຊີອາຫານຂອງທ່ານ, ທ່ານຈະຖືກຂໍໃຫ້ເຊັນຊື່ໃສ່ໃບແລກເອົາເງິນແລະຈະເອົາໂກປີໃບນຶ່ງໃຫ້ທ່ານ. ມັນສຳຄັນຫລາຍທີ່ຈະເກັບຮັກສາໃບໂກປີໃບນີ້ໄວ້ເພື່ອວ່າທ່ານຈະສາມາດຫັກຈຳນວນທີ່ທ່ານຈ່າຍອອກໄປຈາກເງິນຍັງເຫລືອຢູ່ໃນໃບຮັບ EBT ໃບສຸດທ້າຍຫມູ່ຂອງທ່ານ. ອັນນີ້ຈະບອກທ່ານຈຳນວນປັດຈຸບັນຢູ່ໃນບັນຊີຂອງທ່ານ. ຮ້ານຄ້າບໍ່ສາມາດເຮັດໃບແລກເອົາເງິນດ້ວຍສຳລັບການຊ່ວຍເຫລືອເງິນສົດ.

### *ຂ້າພະເຈົ້າສາມາດໄປຫາພະນັກງານທະນາຄານໄດ້ບໍ່ແລະຖອນເອົາເງິນຫລືຖາມຄຳຖາມກ່ຽວກັບບັນຊີ **EBT** ຂອງຂ້າພະເຈົ້າ?*

ບໍ່ໄດ້,ທ່ານຈະຖອນເງິນໄດ້ແຕ່ຈາກຈັກ ATM ເທົ່ານັ້ນ ຫລືໂດຍຜ່ານການຖອນເງິນເອົາເງິນສົດຄືນ/ເອົາເງິນສົດເທົ່ານັ້ນຢູ່ຕາມຮ້ານຄ້າທີ່ເຂົ້າຮ່ວມນຳ. ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບບັນຊີການຊ່ວຍເຫລືອເງິນຫລືອາຫານຂອງທ່ານ, ໃຫ້ໂທຫາຜະແນກປະຊາສັມພັນ.

### *ຖ້າຫາກວ່າຂ້າພະເຈົ້າມີການຊ່ວຍເຫລືອເງິນສົດມູນຄ່າຕ່ຳກວ່າ **$10** ຢູ່ໃນບັດ **Washington EBT Quest Card** ຂອງຂ້າພະເຈົ້າ, ຂ້າພະເຈົ້າຈະເອົາເງິນອອກໄດ້ແນວໃດ?*

ທ່ານສາມາດເຮັດການຊື້ເອົານຳເຄື່ອງຈັກ POS ຫລື ການທຳການຖອນເອົາເງິນຄືນຢູ່ຕາມຮ້ານຄ້າທີ່ເຂົ້າຮ່ວມເພື່ອຈະເອົາເງິນອັນນີ້ອອກມາ.

### *ມັນຈະມີຄ່າທຳນຽມ ຫລື ການເກັບເງິນເກີນຂອງການຖອນຕ່າງໆແນວໃດບໍ່ສຳລັບການໃຊ້ບັດ **Washington Quest EBTCard** ຂອງຂ້າພະເຈົ້າ?*

ມັນຈະບໍ່ມີຄ່າທຳນຽມການຖອນຈັກເທື່ອສຳລັບການໃຊ້ການຊ່ວຍເຫລືອອາຫານຂອງທ່ານເພື່ອຈະຊື້ເອົາອາຫານດ້ວຍບັດ Washington Quest EBT ຂອງທ່ານ. ມັນຍັງຈະບໍ່ມີຄ່າທຳນຽມການຖອນຈັກເທື່ອອີກຄືກັນສຳລັບການໃຊ້ການຊ່ວຍເຫລືອເງິນຂອງທ່ານເພື່ອຈະຊື້ເອົາອາຫານຫລືເອົາເງິນສົດຢູ່ຕາມເຄື່ອງຈັກ POS.

ມັນຈະມີການເກັບເງິນເກີນ. ການເກັບເງິນເກີນແມ່ນຄ່າທຳນຽມເພີ້ມຕື່ມທີ່ຖືກເກັບເອົາໂດຍເຈົ້າຂອງຈັກ ATM ຫລືຈັກ POS ສຳລັບການໃຊ້ຈັກນັ້ນເພື່ອຈະທຳການຖອນເອົາເງິນສົດ. ການເກັບເງິນເກີນ, ຖ້າມີ, ຈະຖືກຫັກອອກຈາກບັນຊີເງິນສົດຂອງທ່ານໂດຍອັດຕະໂນມັດໂລດ. ຖ້າຫາກວ່າທ່ານບໍ່ຢາກຈ່າຍຄ່າເກັບເງິນເກີນ, ພຽງແຕ່ຍົກເລີກການຖອນເງິນຂອງທ່ານແລະໄປຫາຈັກ ATM ຫລື POS ສະຖານທີ່ອື່ນທີ່ບໍ່ເກັບເອົາເງິນຄ່າເງິນເກີນ.

### *ມັນມີການຈຳກັດແນວໃດບໍ່ກ່ຽວກັບວ່າຂ້າພະເຈົ້າໃຊ້ການຊ່ວຍເຫລືອເງິນສົດ **EBT** ຂອງຂ້າພະເຈົ້າແນວໃດ?*

ມັນຈະຜິດຕໍ່ກົດຫມາຍຂອງຣັດທີ່ຈະໃຊ້ບັດ EBT ຫລືເງິນຈາກບັດ EBT ຢູ່ຕາມບ່ອນຂາຍເຫລົ້າ, ບ່ອນດື່ມເຫລົ້າ, ຮ້ານຂາຍເຫລົ້າ, ຫ້ອງການປະກັນຕົວອອກຄຸກ, ບ່ອນມ່ວນຊື່ນຜູ້ ໃຫຍ່, ສະຖາບັນຕ່າງໆບ່ອນທີ່ເດັກຕ່ຳກວ່າກະສຽນຖືກຫ້າມບໍ່ໃຫ້ເຂົ້າ, ທີ່ຈະລິ້ງການພະນັນ, ໄດ້ສັກລາຍຫລືບ່ອງຮ່າງກາຍ, ຫລືຊື້ເອົາຢາສູບ, ກັນຊາ, ຫລືຜະລິດທະພັນເຮັດດ້ວຍກັນຊາ.

### *ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ໃຊ້ການຊ່ວຍເຫລືອຂອງຂ້າພະເຈົ້າ?*

ການຊ່ວຍເຫລືອທີ່ບໍ່ຖືກໃຊ້ໃນຣະຫວ່າງເດືອນທີ່ຖືກເບີກອອກໃຫ້ຈະບໍ່ຖືກຍ້າຍໄປຫາເດືອນຫນ້າ. ຖ້າຫາກວ່າທ່ານບໍ່ໃຊ້ຢ່າງຫນ້ອຍບາງສ່ວນຂອງການຊ່ວຍເຫລືອຂອງທ່ານພາຍໃນ 274 ວັນ, ການຊ່ວຍເຫລືອຈະຖືກຍົກເລີກ. ຢູ່ໃນບາງກໍຣະນີ, ການຊ່ວຍເຫລືອເຫລົ່ານີ້ຈະບໍ່ຖືກເຮັດແທນຄືນໃຫ້ໄດ້.

### *ຂ້າພະເຈົ້າສາມາດຝາກເງິນເຂົ້າໃສ່ບັນຊີ **EBT** ຂອງຂ້າພະເຈົ້າໄດ້ບໍ່?*

ບໍ່ໄດ້. ທ່ານມີແຕ່ຈະຖອນເງິນອອກໄດ້ເທົ່ານັ້ນຈາກບັນຊີເງິນສົດຂອງທ່ານ.

### *ການຝາກເຂົ້າໂດຍກົງແມ່ນຫຍັງ?*

ແທນທີ່ວ່າຈະໃຊ້ EBT, ທ່ານຈະເລືອກເອົາທີ່ຈະໃຫ້ການຊ່ວຍເຫລືອເງິນສົດຂອງທ່ານຖືກຝາກເຂົ້າໃສ່ທຸກໆເດືອນໂດຍກົງໂລດໃສ່ໃນບັນຊີທະນາຄານສ່ວນຕົວອັນໃຫມ່ຫລື ປັດຈຸບັນຂອງທ່ານ. ທ່ານບໍ່ສາມາດໃຊ້ການຝາກເຂົ້າໂດຍກົງສຳລັບການຊ່ວຍເຫລືອ ອາຫານ. ໃຫ້ຕິດຕໍ່ຫາພະນັກງານຂອງທ່ານເພື່ອຣາຍຣະອຽດເພີ້ມເຕີມຫລືໂທຫາເລກໂທຟຣີທີ່ເລກ 1-888-235-2954.

### *ຜູ້ຖືບັດສຳຮອງແມ່ນຫຍັງ?*

ທ່ານຈະເລືອກເອົາຄົນນຶ່ງ, ຊຶ່ງຖືກເອີ້ນວ່າຜູ້ຖືບັດສຳຮອງ, ເພື່ອຈະເອົາການຊ່ວຍເຫລືອຂອງທ່ານໃຫ້ທ່ານ. ຜູ້ຖືບັດສຳຮອງຕ້ອງໄດ້ໄປຫາຫ້ອງການທ້ອງຖິ່ນເພື່ອຈະຮັບເອົາບັດ Washington Quest EBT Card ແລະເລກ PIN ຂອງເຂົາເຈົ້າເອງ. ຖ້າຫາກວ່າທ່ານຕ້ອງການຜູ້ຖືບັດສຳຮອງ, ໃຫ້ເລືອກເອົາບຸກຄົນທີ່ທ່ານເຊື່ອໃຈໄດ້. ໃຫ້ຈື່ໄວ້ວ່າ, ການຊ່ວຍເຫລືອທີ່ຖືກເສັຽໄປຫລືຂະໂມຍໄປຈະບໍ່ຖືກເຮັດແທນຄືນໃຫ້ໄດ້. ທ່ານສາມາດຍົກເລີກບັດຂອງຜູ້ຖືບັດສຳຮອງໄດ້ໂດຍການໂທຫາຜະແນກປະຊາສັມພັນ.

### *ເມື່ອໃດຂ້າພະເຈົ້າຈະໂທຫາຜະແນກປະຊາສັມພັນ?*

- ຖ້າຫາກວ່າບັດຂອງທ່ານເສັຽໄປ, ຖືກຂະໂມຍ ຫລື ເສັຽຫາຍ.
- ຖ້າຫາກວ່າທ່ານລືມ ຫລື ເຮັດເລກ PIN ຂອງທ່ານເສັຽ.
- ພື່ອຈະເລືອກເອົາຫລືປ່ຽນເລກ PIN ຂອງທ່ານ.
- ເພື່ອຈະຖາມເບິ່ງເງິນຍັງເຫລືອຢູ່ຂອງທ່ານ.
- ເພື່ອຈະຟັງເບິ່ງການຖອນ 10 ເທື່ອສຸດທ້າຍຫມູ່ຂອງທ່ານ.
- ເພື່ອຈະຮ້ອງຂໍເອົາປະວັດຂອງການຖອນໃນສອງເດືອນຜ່ານມາ.
- ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບການຖອນ.
- ຖ້າຫາກວ່າທ່ານມີຄຳຖາມແນວໃດ ຫລື ຕ້ອງການຄວາມຊ່ວຍເຫລືອນຳບັດຂອງທ່ານ.

### *ຖ້າຂ້າພະເຈົ້າມີແຜນທີ່ຈະຍ້າຍເຮືອນ ຫລື ປ່ຽນທີ່ຢູ່ຂອງຂ້າພະເຈົ້າເດ?*

ເພື່ອຈະລາຍງານການປ່ຽນແປງຕ່າງໆ,ລວມທັງການປ່ຽນທີ່ຢູ່ຂອງທ່ານໃຫມ່, ຕິດຕໍ່ຫາກົມ DSHS ໂດຍການໂທຫາເລກ 877-501-2233, ຫລືໃຊ້ **www.washingtonconnection.org** ເພື່ອຈະລາຍງານການປ່ຽນແປງທາງອອນລາຍນ໌

This pamphlet is available in your language at your local DSHS Office.

ይህ አለስተኛ መጽሔት በቋንቋዎ በአካቢዎ የዲኤስኤችኤስ ጽህፈት ቤት ይገኛል። (Amharic)

إن هذه النسخة موفرة لك بلغتك في مكتب الـ DSHS في الضاحية التي تسكن بها. (Arabic)

កូនសៀវភៅនេះមានផ្តល់ជូនជាភាសាលោកអ្នកនៅឯការិយាល័យ DSHS ប្រចាំតំបន់របស់លោកអ្នក ។ (Cambodian)

本小冊備有您的語言版本，可向您當地的 DSHS 辦事處索取。(Chinese)

این جزوه در زبان شما در اداره خدمات اجتماعي و درماني DSHS منطقه ایتان در دسترس مي باشد. (Farsi)

Dlaim ntawv nuav muaj txhais ua koj yaam lug hab nwg nyob rua ntawm lub DSHS kws ze koj ko. (Hmong)

이 팜플렛의 한국어 팜플렛은 귀하지역 관할 보건사회부(DSHS) 사무소에 비치돼 있습니다.(Korean)

ປື້ມຄູ່ມືຫົວນີ້ມີໄວ້ໃຫ້ໃນພາສາຂອງທ່ານຢູ່ທີ່ຫ້ອງການ DSHS ທ້ອງຖິ່ນຂອງທ່ານ. (Laotian)

ਇਹ ਪੈਂਫਲੇਟ ਤੁਹਾਨੂੰ ਮਿਲ ਸਕਦਾਂ ਹੈ ਆਪ ਦੀ ਭਾਸ਼ਾ ਵਿਚ ਆਪਣੇ ਸਥਾਨੀ DSHS ਦਫਤਰ II (Punjabi)

Acest pamflet este disponibil în limba dumneavoastră la oficiul DSHS local. (Romanian)

Вы можете получить эту брошюру на своём языке в своём местном офисе DSHS.(Russian)

O lo'o maua le tusi lea i lau gagana i le ofisa o le Welfare (DSHS). (Samoan)

Ovaj pamflet je dostupan i na vašem jeziku u vašem mjesnom DSHS uredu. (Serbo-Croatian)

Waraaqahani waxaad ka helikartaa xafiiska Walfeerka, DSHS, ee kuu dhow, iyaga oo ku qorran afgaaga. (Somali)

Ang pamphlet na ito ay nakasulat rin sa Tagalog at makukuha sa tanggapan ng DSHS na pinakamalapit sa inyo. (Tagalog)

እዚ መጽሔት እዚ ብቋንቋኹም ኣብ ከባቢኹም ዝርከብ ቤት ጽሕፈት ዌልፈር ይርከብ (Tigrigna)

Ви можете одержати цю брошуру на своїй мові в своєму місцевому офісі DSHS.(Ukrainian)

Tập sơ liệu này hiện có bằng ngôn ngữ của quí vị tại văn phòng DSHS địa phương.(Vietnamese)

USDA ແມ່ນຜູ້ບໍຣິການ ແລະ ນາຍຈ້າງຜູ້ທີ່ໃຫ້ໂອກາດເທົ່າທຽມກັນ.

©2021 FIS. ລິກຂະສິດທຸກໆຢ່າງຖືກສະງວນໄວ້.

Washington State Department of Social & Health Services

*Transforming lives*

DSHS 22-310 LA (Rev. 09/21) Laotian

# ການໃຊ້ບັດ Washington Quest EBT Card




**ຄຳເຕືອນຂອງການປັບໄຫມລົງໂທດ:**
ມັນຜິດຕໍ່ກົດຫມາຍທີ່ຈະຂາຍຫລືພະຍາຍາມທີ່ຈະຂາຍບັດ **EBT,** ຫລືແລກປ່ຽນຫລືພະຍາຍາມທີ່ຈະແລກປ່ຽນການຊ່ວຍເຫລືອອາຫານສຳລັບ ສິ່ງໃດສິ່ງນຶ່ງທີ່ມີມູນຄ່າເຊັ່ນວ່າ:ເງິນສົດ, ຢາເສບຕິດ, ອາວຸດ, ຫລື ແນວໃດກໍຕາມນອກຈາກອາຫານຈາກຮ້ານຄ້າຍ່ອຍທີ່ຖືກອະນຸຍາດ.ການໃຊ້ໄປໃນທາງຜິດໂດຍເຈດຕະນາຈະເປັນຜົນເຖິງການຫມົດສິດ,ການປັບໄຫມ,ແລະການຟ້ອງຮ້ອງທາງກົດຫມາຍ,ລວມທັງການຕັດສິນລົງໂທດທາງອາດສະຍາກັມ.

ເພື່ອຣາຍຣະອຽດຂອງບັນຊີ, ແວ່ເຂົ້າເບິ່ງ
**www.ebtedge.com**
ຫລືການໃຊ້ແອບ໌ມືຖື ***ebt*EDGE**

ຫລື ໂທຫາ

### *ຜະແນກປະຊາສັມພັນ*
**888-328-9271**
**711 (TTY State Relay)**
**800-833-6385 (Telebraille)**